CHILDREN'S ADMINISTRATION

# ຄຳຮ້ອງສຳລັບການສຶກສາ ຢູ່ຕາມຄອບຄົວເຮືອນ
# Family Home Study Application

| | |
|---|---|
| 1. ເລກ SSPS ID (ສຳລັບ CA ໃຊ້ເທົ່ານັ້ນ) | 2. ວັນທີທີ່ຄຳຮ້ອງໄດ້ຮັບ (ສຳລັບ CA ໃຊ້ເທົ່ານັ້ນ) |
| 3. ຊື່ຂອງຫ້ອງການເອກະຊົນ ຖ້າກ່ຽວນຳ | 4. ເລກຂອງຜູ້ບໍລິການ FAMLINK (ສຳລັບ CA ໃຊ້ເທົ່ານັ້ນ) |

5. ໝາຍໃສ່ທຸກໆອັນທີ່ກ່ຽວຂ້ອງ

☐ ການລ້ຽງລູກກຳພ້າໃໝ່ ☐ ໃບອະນຸຍາດຣີບດ່ວນ ☐ ການຕໍ່ໃໝ່
☐ ບ່ອນຢູ່ໃໝ່ ☐ ການເອົາມາເປັນລູກລ້ຽງ ☐ ພີ່ນ້ອງ/ຄົນອື່ນທີ່ເໝາະສົມ

| 6. ຜູ້ຮ້ອງຂໍເລກ 1 (ຄົນຕິດຕໍ່ຕົ້ນຕໍ) | | 7. ຜູ້ຮ້ອງຂໍເລກ 2 (ຄົນຕິດຕໍ່ສຳລອງ) | |
|---|---|---|---|
| ຊື່ (ນາມສະກຸນ,ຊື່,ຊື່ກາງ) | | ຊື່ (ນາມສະກຸນ,ຊື່,ຊື່ກາງ) | |
| ຊື່ແມ່ກຳເນີດ (ຂຽນຊື່ແຕ່ງງານແຕ່ກ່ອນອີກຖ້າກ່ຽວຂ້ອງ) | | ຊື່ແມ່ກຳເນີດ (ຂຽນຊື່ແຕ່ງງານແຕ່ກ່ອນອີກຖ້າກ່ຽວຂ້ອງ) | |
| ຄວາມຊອບໃຈທາງສາສນາ (ຖ້າມີ) | ອາຊີບ | ຄວາມຊອບໃຈທາງສາສນາ (ຖ້າມີ) | ອາຊີບ |
| ການສຶກສາ (ຫ້ອງຮຽນສູງສຸດທີ່ສຳເຣັດ) | ຣາຍໄດ້ປະຈຳປີ (ທັງໝົດ) | ການສຶກສາ (ຫ້ອງຮຽນສູງສຸດທີ່ສຳເຣັດ) | ຣາຍໄດ້ປະຈຳປີ (ທັງໝົດ) |
| ເພດ | ສະພາບແຕ່ງງານ | ເພດ | ສະພາບແຕ່ງງານ |
| ພາສາຕົ້ນຕໍ | | ພາສາຕົ້ນຕໍ | |

| | | | |
|---|---|---|---|
| 8. ທີ່ຢູ່ຖາວົນ | ເມືອງ | ຣັດ | ຊິບໂຄດ |
| 9. ທີ່ຢູ່ໄປສະນີ | ເມືອງ | ຣັດ | ຊິບໂຄດ |

10. ຄວາມຊອບໃຈໃນການຈັດໃສ່

☐ ບໍ່ມີຄວາມຊອບໃຈ **ຫລື** ເລກ___ຊ່ວງອາຍຸ:ຕັ້ງແຕ່___ໄປເຖິງ___ **ແລະ** ☐ ຊາຍ ☐ ຍິງ ☐ ອັນໃດອັນນຶ່ງ

11. ການຈັດໃສ່ຂອງ DCFS (ຄັດເຈ້ຍມານຳຖ້າມີເດັກນ້ອຍຫລາຍກວ່າສອງຄົນ)

| | |
|---|---|
| ຊື່ຂອງເດັກນ້ອຍ:____________________<br>ວັນທີຂອງການຈັດຫາບ່ອນຢູ່ໃຫ້<br>ຄວາມສັມພັນຕໍ່ຜູ້ກ່ຽວ (ເດັກນ້ອຍ:____________<br>ຊື່ຂອງພະນັກງານສັງຄົມ:____________ | ຊື່ຂອງເດັກນ້ອຍ:____________________<br>ວັນທີຂອງການຈັດຫາບ່ອນຢູ່ໃຫ້<br>ຄວາມສັມພັນຕໍ່ຜູ້ກ່ຽວ (ເດັກນ້ອຍ:____________<br>ຊື່ຂອງພະນັກງານສັງຄົມ:____________ |

12. ເລກໂທຣະສັບ (ລວມທັງຣະຫັດເຂດ)

| ເຮືອນ | ໂທຣະສັບມືຖື | ວຽກງານ | ທີ່ຢູ່ອີແມລ໌ |
|---|---|---|---|

13. ຊື່ຂອງໂຮງຮຽນໃກ້ທີ່ສຸດ

| ໝວດໂຮງຮຽນ | ປະຖົມ | ຊັ້ນກາງ/ຈູເນີຣາຍສະກຸລ | ຣາຍສະກຸລ |
|---|---|---|---|

14. ຄົນຜູ້ທີ່ອາສັຍຢູ່ໃນຄອບຄົວ (ລວມທັງຕົນເອງ) ຕິດຄັດເຈ້ຍເພີ້ມເຕີມມານຳຖ້າຕ້ອງການ

| ຊື່ (ຊື່ແລະນາມສະກຸນ) | ວັນເກີດ | ເພດ ຊ/ຍ | ຄວາມສັມພັນຕໍ່ຜູ້ຮ້ອງຂໍ | ຜິວພັນ | ຊົນເຜົ່າ | ເລກໂຊໂຊ |
|---|---|---|---|---|---|---|
| 1. | | | | | | |
| 2. | | | | | | |
| 3. | | | | | | |
| 4. | | | | | | |
| 5. | | | | | | |

15. ມີຄົນໃດຄົນນຶ່ງອີກບໍ່ອາສັຍຢູ່ໃນທີ່ດິນຂອງທ່ານ? ☐ ມີ ☐ ບໍ່ມີ

16. ການອ້າງອີງໃນອຸປະນິສັຍ. ຂຽນຊື່ລູກຜູ້ໃຫຍ່ທຸກໆຄົນ ແລະ ໜັງສືອ້າງອີງຮັບຮອງຈາກຄົນທີ່ບໍ່ມີສາຍສັມພັນນຳກັນຢ່າງໜ້ອຍສອງຄົນຜູ້ທີ່ໄດ້ເຫັນທ່ານມີປະຕິກິຣິຍານຳເດັກນ້ອຍ. ໜັງສືອ້າງອີງຮັບຮອງຢ່າງຕ່ຳສຸດສາມໃບຕ້ອງມີ. ຄັດໃບເຈ້ຍເພີ້ມເຕີມມານຳຖ້າຕ້ອງການ.

| ຊື່ (ຊື່ແລະນາມສະກຸນ) | ທີ່ຢູ່ໄປສະນີ ແລະ ອີແມລ໌ຄົບຖ້ວນ (ລວມທັງຊິບໂຄດ) | ຄວາມສັມພັນ ຕໍ່ຜູ້ຮ້ອງຂໍ | ເລກໂທຣະສັບ (ລວມທັງຣະຫັດເຂດ) |
|---|---|---|---|
| | | | |
| | | | |
| | | | |

**ກະຣຸນາຕອບຄຳຖາມຕໍ່ລົງໄປນີ້**

17. ທ່ານໄດ້ຢູ່ໃນຣັດວໍຊິງຕັນເປັນເວລາຕິດຕໍ່ກັນ 5 ປີຜ່ານມາບໍ່? ☐ ແມ່ນ ☐ ບໍ່ແມ່ນ
ຖ້າບໍ່ແມ່ນ,ກະຣຸນາຂຽນທີ່ຢູ່ໃນຜ່ານມາທຸກໆບ່ອນສຳລັບຜູ້ຮ້ອງຂໍແຕ່ລະຄົນສຳລັບຫ້າປີສຸດທ້າຍຫມູ່.ຕື່ມເຈັ້ຽເພີ້ມເຕີມໃສ່ຖ້າຫາກຕ້ອງການ.

| ຊື່ | ເທສບານແລະເມືອງ | ຣັດ | ວັນທີ: ຕັ້ງແຕ່-ໄປເຖີງ |
|---|---|---|---|
| | | | |
| | | | |

| | ຜູ້ຮ້ອງຂໍ #1 ແມ່ນ | ຜູ້ຮ້ອງຂໍ #1 ບໍ່ແມ່ນ | ຜູ້ຮ້ອງຂໍ #2 ແມ່ນ | ຜູ້ຮ້ອງຂໍ #2 ບໍ່ແມ່ນ | ອື່ນໆ ແມ່ນ | ອື່ນໆ ບໍ່ແມ່ນ |
|---|---|---|---|---|---|---|
| 18. ສຳລັບຄົນຢູ່ໃນຄອບຄົວຜູ້ທີ່ຂັບຣົດ: | | | | | | |
| A. ທ່ານມີໃບຂັບຂີ່ຣົດທີ່ໃຊ້ການໄດ້ຢູ່ບໍ່? | ☐ | ☐ | ☐ | ☐ | ☐ | ☐ |
| B. ມີການຈຳກັດແນວໃດບໍ່ໃນໃບຂັບຂີ່ຂອງທ່ານ? ຖ້າແມ່ນ,ແມ່ນຫຍັງ? | ☐ | ☐ | ☐ | ☐ | ☐ | ☐ |
| C. ທ່ານມີປະກັນພັຍຮັບຜິດຊອບ/ພະຍາບານສຳລັບຣົດບໍ່? (ກະຣຸນາຄັດໃບໂກປີປັດຈຸບັນສະແດງໃຫ້ເຫັນຈຳນວນເງີນການຄຸ້ມກັນແລະວັນທີຫມົດກຳນົດ) | ☐ | ☐ | ☐ | ☐ | ☐ | ☐ |
| 19. ຜູ້ຮ້ອງຂໍຫລືສະມາຊິກຂອງຄອບຄົວຄົນອື່ນຄົນໃດຄົນນຶ່ງ: | ☐ | ☐ | ☐ | ☐ | ☐ | ☐ |
| A. ມີການບາດເຈັບສາຫັດ,ການເຈັບປ່ວຍຫລືການນອນໂຮງຫມໍໃນຣະຫວ່າງປີຜ່ານມາ,ຫລືກິນຢາໃນປັດຈຸບັນຫລືມີປະວັດຂອງການຈຳກັດທາງດ້ານມັນສະມອງແລະຮ່າງກາຍບໍ່? | | | | | | |
| B. ໄດ້ຖືກພົບວ່າເປັນຜູ້ກະທຳຜິດໃນການກົດຂີ່ຂົ່ມເຫັງເດັກນ້ອຍບໍ່? | ☐ | ☐ | ☐ | ☐ | ☐ | ☐ |
| C. ໄດ້ກະທຳໃນການໃຊ້ຫລືການຂາຍຢາເສພຕິດທີ່ຜິດກົດຫມາຍບໍ່? | ☐ | ☐ | ☐ | ☐ | ☐ | ☐ |
| D. ໄດ້ຖືກບອກວ່າເຂົາເຈົ້າມີບັນຫານຳເຫລົ້າບໍ່? | ☐ | ☐ | ☐ | ☐ | ☐ | ☐ |
| E. ໄດ້ຖືກຕັດສິນລົງໂທດໃນອາສຍາກັມບໍ່? | ☐ | ☐ | ☐ | ☐ | ☐ | ☐ |
| F. ໄດ້ຖືກປະຕິເສດໃນໃບອະນຸຍາດໃຫ້ເບິ່ງແຍງດູແລເດັກນ້ອຍຫລືຜູ້ໃຫຍ່ບໍ່? | ☐ | ☐ | ☐ | ☐ | ☐ | ☐ |
| G. ມີໃບອະນຸຍາດໃຫ້ເບິ່ງແຍງດູແລເດັກນ້ອຍຫລືຜູ້ໃຫຍ່ຖືກໂຈະໄວ້ຫລືຍົກເລີກບໍ່? | ☐ | ☐ | ☐ | ☐ | ☐ | ☐ |
| H. ເຄີຍຂໍເອົາໃບອະນຸຍາດຢູ່ເຮືອນມາກ່ອນບໍ່? ຢູ່ໃສ? | ☐ | ☐ | ☐ | ☐ | ☐ | ☐ |
| I. ທ່ານໄດ້ຮ້ອງຂໍເພື່ອຈະເອົາເດັກນ້ອຍມາເປັນລູກລ້ຽງມາກ່ອນບໍ່? ຢູ່ໃສ? | ☐ | ☐ | ☐ | ☐ | ☐ | ☐ |

20. ຣາຍລະອຽດຕິດຕໍ່ຍາມສຸກເສີນ

| ຢູ່ໃນຣັດ/ຢູ່ນອກເຂດ | | ຢູ່ນອກເຂດ | |
|---|---|---|---|
| ຊື່ | | ຊື່ | |
| ທີ່ຢູ່ | | ທີ່ຢູ່ | |
| ເມືອງ ຣັດ ຊິບໂຄດ | | ເມືອງ ຣັດ ຊິບໂຄດ | |
| ເລກໂທເຮືອນ | ເລກໂທມືຖື | ເລກໂທເຮືອນ | ເລກໂທມືຖື |
| ເລກໂທວຽກງານ | ທີ່ຢູ່ອີແມລ໌ | ເລກໂທວຽກງານ | ທີ່ຢູ່ອີແມລ໌ |

**ພວກຂ້າພະເຈົ້າ/ຂ້າພະເຈົ້າ**ຢັ້ງຢືນຕໍ່ໄປອີກວ່າຣາຍລະອຽດຢູ່ຂ້າງເທິງນີ້ແລະສິ່ງຄັດມານຳທີ່ຖືກບົ່ງເອົາວ່າເປັນຄວາມຈິງແລະຖືກຕ້ອງອີງຕາມຄວາມຮັບຮູ້ທີ່ດີທີ່ສຸດຂອງຂ້າພະເຈົ້າ (ພວກຂ້າພະເຈົ້າ) .ຄວາມຜິດພາດທີ່ຈະເປີດເຜີຍຣາຍລະອຽດທີ່ກ່ຽວຂ້ອງທັງຫມົດຢ່າງຖືກຕ້ອງເປັນຄວາມຈິງອາດຈະເປັນພື້ນຖານສຳລັບການປະຕິເສດຄຳຮ້ອງໃບນີ້ຫລືການຍົກເລີກໃບອະນຸຍາດ.

**ພວກຂ້າພະເຈົ້າ/ຂ້າພະເຈົ້າ**ເອົາການອະນຸຍາດໃຫ້ກົມ DSHS/ອົງການເອກຊົນທີ່ຈະຕິດຕໍ່ໄປຫາຜູ້ຢັ້ງຢືນອ້າງອີງທີ່ຖືກບົ່ງຊື່ຢູ່ໃນຄຳຮ້ອງໃບນີ້**ແລະ**ເພື່ອຈະເວົ້າລົມເຣື່ອງທີ່ກ່ຽວຂ້ອງນຳໃບຄຳຮ້ອງຂອງຂ້າພະເຈົ້າ (ພວກຂ້າພະເຈົ້າ) ສຳລັບການຮັບເອົາໄປເປັນລູກລ້ຽງ/ໃບອະນຸຍາດເບິ່ງແຍງດູແລລູກກຳພ້າ/ການຈັດໃຫ້ຢູ່ນຳພີ່ນ້ອງ.

**ພວກຂ້າພະເຈົ້າ/ຂ້າພະເຈົ້າ**ເຂົ້າໃຈວ່າກົມ DSHS ຈະທຳການກວດເບິ່ງບັນທຶກປະວັດອາສຍາກັມແລະການກວດເບິ່ງໃນບັນທຶກຂອງກົມ DSHS ກ່ຽວກັບການກົດຂີ່ຂົ່ມເຫັງແລະການການປ່ອຍປະລະເລີຍສຳລັບທຸກໆຄົນຜູ້ທີ່ກຳລັງຮ້ອງຂໍເອົາ.

| | |
|---|---|
| ລາຍເຊັນຂອງຄົນຕິດຕໍ່ຕົ້ນຕໍ | ວັນທີ |
| ລາຍເຊັນຂອງຄົນຕິດຕໍ່ສຳລອງ | ວັນທີ |

**ຫມາຍເຫດ:ມາຕຣາ WAC 388-148-1625 ຂອງກົດຫມາຍປົກຄອງຣັດວໍຊິງຕັນບອກວ່າພແນກ OFCL ອາດຈະປະຕິເສດ,ໂຈະໄວ້,ຍົກເລີກ,ຫລືບໍ່ຕໍ່ອາຍຸຂອງໃບອະນຸຍາດສຳລັບການບໍ່ແຈ້ງສະເນີຄວາມຈິງຫລືການເຊື່ອງຣາຍລະອຽດໃນໃບຄຳຮ້ອງໃບນີ້.**

ການຂຽນປະກອບຂອງຟອມໃບນີ້ເປັນບາດກ້າວທຳອິດໃນການດຳເນີນການຂອງຄຳຮ້ອງ ແລະ ບໍ່ຮັບປະກັນວ່າຄຳຮ້ອງຈະຖືກອະນຸມັດ.

# <u>ຄຳແນະນຳ</u>

ຄຳແນະນຳເຫລົ່ານີ້ແມ່ນສຳລັບຄຳຮ້ອງຂໍເອົາການສຶກສາຢູ່ຕາມຄອບຄົວເຮືອນ. ກົມໃຊ້ການສຶກສາຢູ່ຕາມເຮືອນສຳລັບການອະນຸມັດໃນການຈັດໃຫ້ຢູ່ນຳພີ່ນ້ອງ, ການຈັດໃຫ້ຢູ່ນຳບຸກຄົນທີ່ເຫມາະສົມ, ການອອກໃບອະນຸຍາດສຳລັບການເບິ່ງແຍງດູແລລູກກຳພ້າ ແລະ ການຮັບເອົາມາເປັນລູກລ້ຽງ.

1. **<u>ເລກ SSPS ID</u>:** ສຳລັບຫ້ອງການ DSHS ໃຊ້ເທົ່ານັ້ນ.

2. <u>ວັນທີທີ່ໄດ້ຮັບໃບຄຳຮ້ອງ</u>: ສຳລັບຫ້ອງການ DSHS ໃຊ້ເທົ່ານັ້ນ.

3. <u>ຊື່ຂອງຫ້ອງການເອກຊົນ (ຖ້າມີຢູ່)</u> : ຖ້າຫາກວ່າທ່ານຂໍເອົານຳອົງການເອກຊົນ,ຂຽນຊື່ຂອງອົງການເອກຊົນໃສ່.

4. **<u>FamLink ເລກຂອງຜູ້ບໍລິການ:</u>** ສຳລັບຫ້ອງການ DSHS ໃຊ້ເທົ່ານັ້ນ.

5. <u>ຊະນິດຂອງໃບຄຳຮ້ອງ</u>: ຫມາຍໃສ່ທຸກໆບອກທີ່ກ່ຽວຂ້ອງນຳ.

6–7 <u>ຊື່ຂອງຄົນຕິດຕໍ່ຕົ້ນຕໍແລະສຳລອງ</u>: ຂຽນຊື່ເຕັມຕາມກົດຫມາຍຂອງທ່ານ, ນາມສະກຸນ, ຊື່, ແລະ ຊື່ກາງ ແລະ/ຫລື ຊື່ຫຍໍ້. ໃບຄຳຮ້ອງຂໍສຳລັບໃບອະນຸຍາດການເບິ່ງແຍງດູແລເດັກກຳພ້າ, ການສຶກສາເບິ່ງການຮັບເອົາມາເປັນລູກລ້ຽງຢູ່ເຮືອນແລະການຈັດໃຫ້ຢູ່ນຳພີ່ນ້ອງສຳລັບເດັກນ້ອຍຕ້ອງຖືກເຮັດໂດຍຜົວ ແລະ ເມັຽທັງສອງຄົນ ຖ້າຫາກວ່າເຂົາເຈົ້າອາສັຍຢູ່ນຳກັນ ແລະ ແຕ່ງງານກັນຖືກຕ້ອງຕາມກົດຫມາຍ. ຢູ່ໃນກໍຣະນີຂອງຜູ້ໃຫຍ່ບໍ່ໄດ້ແຕ່ງງານກັນຜູ້ທີ່ອາສັຍຢູ່ນຳກັນ, ແລະ ຜູ້ທີ່ຈະແບ່ງສ່ວນຢ່າງສະເມີ່ສະເມີກັນໃນການເບິ່ງແຍງດູແລເດັກນ້ອຍ, ທັງສອງຄົນຕ້ອງຖືກຂຽນຊື່ລົງໄປວ່າເປັນຜູ້ຮ້ອງຂໍ.
ຂຽນແຕ່ຊື່ຂອງຜູ້ທີ່ຮ້ອງຂໍເອົາເທົ່ານັ້ນ. ຊື່ຂອງສະມາຊິກຄອບຄົວຄົນອື່ນຜູ້ທີ່ບໍ່ແມ່ນຜູ້ຮ້ອງຂໍບໍ່ຄວນຈະຖືກຂຽນໃສ່ໃນພາກສ່ວນທີ13 (ຄົນຜູ້ທີ່ອາສັຍຢູ່ໃນຄອບຄົວ).

| | |
|---|---|
| ສາສະນາ: | ຂຽນການພົວພັນທາງສາສະນາສຳລັບຜູ້ຮ້ອງຂໍແຕ່ລະຄົນໃສ່. |
| ອາຊີບ: | ຂຽນອາຊີບສຳລັບຜູ້ຮ້ອງຂໍແຕ່ລະຄົນໃສ່. |
| ການສຶກສາ: | ຂຽນຫ້ອງຮຽນສູງສຸດທີ່ສຳເຣັດສຳລັບຜູ້ຮ້ອງຂໍແຕ່ລະຄົນໃສ່. |
| ຣາຍໄດ້ປະຈຳປີ: | ຂຽນຣາຍໄດ້ປະຈຳປີສຳລັບຜູ້ຮ້ອງຂໍແຕ່ລະຄົນໃສ່. |
| ສະພາບແຕ່ງງານ: | ຂຽນສະພາບແຕ່ງງານຂອງຄົນຕິດຕໍ່ແຕ່ລະຄົນ (ແຕ່ງງານ, ໂສດ (ບໍ່ເຄີຍແຕ່ງງານຈັກເທື່ອ), ຢ່າຮ້າງ, ຫມ້າຍ) |

8. <u>ທີ່ຢູ່</u>: ຂຽນທີ່ຢູ່ເຮືອນຂອງທ່ານໃສ່.

9. <u>ທີ່ຢູ່ໄປສະນີ</u>: ຂຽນທີ່ຢູ່ໄປສະນີຂອງທ່ານໃສ່ຖ້າຫາກວ່າແຕກຕ່າງຈາກທີ່ຢູ່ເຮືອນຂອງທ່ານ.

10. <u>ຄວາມຊອບໃຈໃນການຈັດໃສ່</u>: ກະຣຸນາຊີ້ບອກເລກ,ອາຍຸ,ແລະເພດຂອງເດັກນ້ອຍຜູ້ທີ່ທ່ານສົນໃຈຢາກໃຫ້ຖືກຈັດໃສ່ໃນເຮືອນຂອງທ່ານ.ຖ້າຫາກວ່າທ່ານບໍ່ມີຄວາມຊອບໃຈຢາກໄດ້,ຫມາຍ"ອັນໃດກໍໄດ້"ແລະ"ບໍ່ຢາກເລືອກເອົາອາຍຸ"ໃສ່.ຖ້າຫາກວ່າທ່ານຂໍເອົາເດັກນ້ອຍຄົນນຶ່ງໂດຍສະເພາະ,ກະຣຸນາບອກຊື່ຂອງເດັກນ້ອຍ, ລວມທັງຄວາມສັມພັນຂອງຜູ້ຮ້ອງຂໍຕໍ່ເດັກນ້ອຍ.ຕົວຢ່າງວ່າ,ພໍ່ເຖົ້າແມ່ເຖົ້າ,ຄວາມສຳພັນເປັນພໍ່ນ້າແມ່ນ້າ,ພໍ່ຮັກແມ່ຮັກ,ພີ່ນ້ອງຊັ້ນສອງ,ຫມູ່ຄູ່ຂອງຄອບຄົວ,ພໍ່ແມ່ລ້ຽງ,ອື່ນໆ.

11. <u>ການຈັດໃສ່ຂອງ **DCFS**</u>: ຂຽນຊື່ຂອງເດັກນ້ອຍ,ຄວາມສັມພັນຕໍ່ເດັກນ້ອຍ,ແລະຊື່ຂອງພະນັກງານສັງຄົມ.ໃຊ້ເຈັ້ຽຕ່າງຫາກສຳລັບເດັກນ້ອຍເພີ້ມເຕີມ.

12. <u>ເລກໂທຣະສັບ</u>: ຂຽນເລກໂທຣະສັບໃສ່ສຳລັບຜູ້ຮ້ອງຂໍແຕ່ລະຄົນລວມທັງເລກຣະຫັດເຂດ (ເຮືອນ,ໂທຣະສັບມືຖື,ຫລືວຽກງານ) ຖ້າຫາກວ່າທ່ານບໍ່ມີໂທຣະສັບ,ຂຽນຕົວ“X” ໃສ່ບ່ອນວ່າງທີ່ຖືກເອົາໃຫ້.

    <u>ທີ່ຢູ່ອີແມລ໌</u>: ກະຣຸນາເອົາທີ່ຢູ່ອີແມລ໌ສ່ວນຕົວຂອງທ່ານໃຫ້ຖ້າຫາກວ່າທ່ານມີອັນນຶ່ງ.

13. <u>ຊື່ຂອງໂຮງຮຽນ</u>: ຂຽນຫມວດໂຮງຮຽນ ແລະ ຊື່ຂອງໂຮງຮຽນທີ່ຢູ່ໃກ້ບ້ານທ່ານທີ່ສຸດ (ປະຖົມ,ຊັ້ນກາງ/ຈູເນີຣາຍ,ຣາຍສະກຸນ).

14. <u>ຄົນຜູ້ທີ່ອາສັຍຢູ່ໃນຄອບຄົວ (ລວມທັງຕົນເອງ)</u> : ເລີ້ມຕົ້ນດ້ວຍຜູ້ຮ້ອງຂໍເອົາ,ຂຽນຊື່ (ຊື່ແລະນາມສະກຸນ) ,ວັນເກີດ,ເພດ (M ສຳລັບຊາຍຫລື F ສຳລັບຍິງ) ,ແລະຄວາມສັມພັນຂອງເຂົາເຈົ້າຕໍ່ຜູ້ຮ້ອງຂໍ (ຕົວຢ່າງວ່າ,ຜົວເມັຽ,ລູກຊາຍ,ລູກສາວ,ແມ່,ເດັກກຳພ້າ,ຄົນກິນນອນນຳ,ອື່ນໆ) .ຖ້າຫາກວ່າເດັກນ້ອຍຜູ້ທີ່ທ່ານຂໍເອົາໄດ້ອາສັຍຢູ່ເຮືອນຂອງທ່ານແລ້ວ,ລວມເອົາຄົນນັ້ນໃສ່ບ່ອນນີ້.ຂຽນເລກໂຊໂຊຂອງທຸກໆຄົນຜູ້ທີ່ອາສັຍຢູ່ໃນເຮືອນ.

    <u>ຜົວພັນ</u>: ຊີ້ບອກທຸກໆຢ່າງທີ່ກ່ຽວຂ້ອງນຳແຕ່ລະຄົນ:ຄົນອະເມຣິກັນອິນດຽນຫລືຄົນອາລາສກາດັ້ງເດີມ,ຄົນເອເຊັຽ,ຄົນດຳຫລືແອຟຣິກັນອະເມຣິແກນ, ຄົນຮາວາອີດັ້ງເດີມຫລືຄົນຢູ່ເກາະແປຊີຟິກອື່ນໆ,ຄົນຂາວ,ຄົນຈີນ,ຄົນຟີລີປິນ,ຄົນຍີ່ປຸ່ນ,ຄົນເກົາຫລີ,ຄົນວຽດນາມ,ຄົນຊາມວນ,ຄົນເກາະກວມ,ຫລືຄົນຊາມໍໂຣ.

    <u>ຊົນເຜົ່າ</u>: ຖ້າຫາກວ່າທ່ານເປັນຄົນສະແປນິຊ/ຮິສແປນິກ/ລາຕີໂນ,ໃຫ້ຫມາຍໃສ່ອັນນຶ່ງຂອງຊົນເຜົ່າດັ່ງຕໍ່ລົງໄປນີ້:ຄົນຄິວບາ,ຄົນແມກຊິແກນ,ຄົນແມກຊິແກນອະເມຣິກັນຫລືຊິກາໂນ,ເປີໂຕຣິແກນ,ຫລືສະແປນິຊ໌/ຮິສແປນິກ/ລາຕີໂນ.

    ຕິດຄັດເຈັ້ຽເພີ້ມເຕີມມານຳຖ້າຈຳເປັນສຳລັບແຕ່ລະຄົນຢູ່ໃນຄອບຄົວ.

15. <u>ຄົນອື່ນອາສັຍຢູ່ໃນທີ່ດິນຂອງທ່ານ</u>
    ກະຣຸນາເອົາຕົວ“X” ໃສ່ໃນບອກທີ່ເຫມາະສົມເພື່ອຈະຊີ້ບອກຖ້າຫາກວ່າມີຄົນອື່ນອີກທີ່ອາສັຍຢູ່ໃນທີ່ດິນຂອງທ່ານແຕ່ວ່າບໍ່ຢູ່ໃນເຮືອນ.

16. <u>ການອ້າງອີງໃນອຸປະນິສັຍ</u>: ຂຽນຊື່, ທີ່ຢູ່ໄປສະນີ, ແລະ ເລກໂທຣະສັບຂອງສີ່ຄົນຜູ້ທີ່ຮູ້ຈັກທ່ານດີ ແລະ ສາມາດຢືນຢັນໃນຄວາມສາມາດຂອງທ່ານທີ່ຈະໃຫ້ການເບິ່ງແຍງດູແລ ສຳລັບເດັກນ້ອຍ.ທ່ານຈະໃຊ້ພີ່ນ້ອງຄົນດຽວເທົ່ານັ້ນໄດ້ໃຫ້ເປັນຜູ້ອ້າງອີງໃນອຸປະນິສັຍ.ພະນັກງານສັງຄົມຂອງທ່ານອາດຈະຂໍເອົາການອ້າງອີງໃນອຸປະນິເພີ້ມເຕີມອີກ.

17. <u>ຣັດຂອງບ່ອນຢູ່ອາສັຍ</u>: ຊີ້ບອກຖ້າຫາກວ່າທ່ານເຄີຍອາສັຍຢູ່ໃນຣັດອື່ນນອກຈາກຣັດວໍຊິງຕັນໃນຣະຫວ່າງຫ້າ(5) ປີຕິດຕໍ່ກັນຜ່ານມາ.ຖ້າຫາກວ່າທ່ານເຄີຍອາສັຍຢູ່ນອກຣັດວໍຊິງຕັນໃນຣະຫວ່າງຫ້າ(5) ປີຜ່ານມາ,ກະຣຸນາຊີ້ບອກວ່າທ່ານອາສັຍຢູ່ໃສໂດຍຊື່,ເມືອງ,ຣັດ,ແລະເດືອນໃດແລະປີໃດທີ່ທ່ານໄດ້ອາສັຍຢູ່ໃນເມືອງນັ້ນແລະຣັດນັ້ນ.

18. **<u>(A-C)</u>** <u>ໃບຂັບຂີ່ຣົດ</u>: ສຳລັບທຸກໆຄົນຢູ່ໃນເຮືອນຂອງທ່ານຜູ້ທີ່ຂັບຣົດ,ໝາຍບອກຖ້າຫາກວ່າເຂົາເຈົ້າມີໃບຂັບຂີ່ທີ່ໃຊ້ການໄດ້ຢູ່ແລະປະກັນພັຍຮັບຜິດຊອບ.ປະກັນພັຍຮັບຜິດຊອບໄດ້ຖືກກຳນົດໃຫ້ມີສຳລັບຣົດທຸກໆຄັນທີ່ຖືກໃຊ້ໃນການຂົນສົ່ງເດັກນ້ອຍຜູ້ທີ່ຖືກຈັດໃສ່ໃນການເບິ່ງແຍງດູແລຂອງທ່ານ.

19. **<u>(A-I)</u>** ໝາຍຕົວ“X” ໃສ່ໃນບອກທີ່ເໝາະສົມ.

ຖ້າ"ແມ່ນ"ໄດ້ຖືກໝາຍໃສ່ສຳລັບຜູ້ຮ້ອງຂໍເອົາຫລືຜູ້ໃຫຍ່ຄົນອື່ນ (ທຸກໆຄົນອາຍຸກາຍເກີນ18 ປີ) ຜູ້ທີ່ອາສັຍຢູ່ໃນເຮືອນ,ກະຣຸນາໃຫ້ຄຳອະທິບາຍກ່ຽວກັບສະພາບການໃສ່ໃນເຈັ້ຽເພີ້ມເຕີມແລະຕິດຄັດມານຳໃບຄຳຮ້ອງຂໍ.ຄຳຕອບທີ່ມີເຄື່ອງໝາຍວ່າ"ແມ່ນ"ຈະບໍ່ເຮັດໃຫ້ທ່ານໝົດສິດ.ທ່ານຈະມີໂອກາດທີ່ຈະເວົ້າລົມກັນກ່ຽວກັບຄຳຕອບຂອງທ່ານ.

20. <u>ຣາຍລະອຽດຕິດຕໍ່ຍາມສຸກເສີນ</u>

ກະຣຸນາຂຽນຊີ້ບອກຊື່,ທີ່ຢູ່,ແລະເລກໂທຣະສັບສຳລັບສອງຄົນຕິດຕໍ່ຫາຢູ່ໃນເຫດການຍາມສຸກເສີນ.ຄົນນຶ່ງຄວນຈະຢູ່ພາຍໃນຣັດວໍຊິງຕັນ,ແຕ່ວ່າຢູ່ໃນຊຸມນຸມຊົນບ່ອນຕ່າງຈາກບ່ອນທີ່ຜູ້ຮ້ອງຂໍອາສັຍຢູ່ແລະອີກຄົນນຶ່ງຄວນຈະຢູ່ໃນຣັດຕ່າງ.

ກະຣຸນາກວດເບິ່ງໃບຄຳຮ້ອງທີ່ຖືກຂຽນປະກອບແລ້ວຄືນ.ຕິດຄັດໃບແຈ້ງການມານຳຊຶ່ງຈະອະທິບາຍຄຳຕອບຂອງທ່ານວ່າ"ແມ່ນ"ຕໍ່ຄຳຖາມ**16-18 (A- I)?**

ຜູ້ຮ້ອງຂໍຕ້ອງໄດ້ເຊັນຊື່ແລະໃສ່ວັນທີໃບຄຳຮ້ອງກ່ອນສົ່ງເຂົ້າມາ.

ການຂຽນປະກອບຟອມໃບນີ້ບໍ່ໄດ້ຮັບປະກັນວ່າຜູ້ຮ້ອງຂໍຈະຖືກອະນຸມັດ.

*ຂອບໃຈສຳລັບເວລາແລະຄວາມອົດໃຈຂອງທ່ານ.ຖ້າຫາກທ່ານມີຄຳຖາມແນວໃດ,ຫລືຕ້ອງການຄວາມຊ່ວຍເຫລືອໃນການຂຽນປະກອບຟອມໃບນີ້, ກະຣຸນາຕິດຕໍ່ໄປຫາອົງການຂອງທ່ານ.*